## ບົດຮຽນທີ 7 - ການຕາຍຂອງພຣະຄຣິດ

### ຂ່າວປະເສີດ

ໃນບົດຮຽນທີຫ້າ ພວກເຮົາໄດ້ຮຽນຮູ້ວ່າ ຜູ້ມະນຸດທຸກຄົນໄດ້ເຮັດຜິດຕໍ່ພຣະເຈົ້າຜູ້ຊົງບໍລິສຸດ. ບົດຮຽນທີຫົກໄດ້ສອນພວກເຮົາວ່າຄວາມບາບເຮັດໃຫ້ມີການລົງໂທດທີ່ຮ້າຍແຮງ - ຄວາມທຸກທໍລະມານນິລັນດອນໃນນາລົກ. ເຖິງຢ່າງໃດກໍຕາມ,ຕອນນີ້ພວກ ເຮົາກຳລັງກ້າວໄປສູ່ຂ່າວດີ! ໃນບົດຮຽນນີ້ ພວກ ເຮົາຈະຮຽນຮູ້ກ່ຽວກັບຄວາມຮັກອັນມະຫັດສະຈັນຂອງພຣະເຈົ້າສຳລັບມະນຸດຊາດ. "ແຕ່ພຣະເຈົ້າໄດ້ຊົງສຳແດງໃຫ້ພວກເຮົາເຫັນວ່າ ພຣະອົງຊົງຮັກພວກ ເຮົາຫລາຍເທົ່າໃດ ຄືຂະນະທີ່ພວກເຮົາຍັງເປັນຄົນບາບຢູ່ນັ້ນ ພຣະຄຣິດໄດ້ຊົງຍອມຕາຍແທນເຮົາທັງຫລາຍ. ໂຣມ 5:8” (ໂຣມ 5: 8) ຂ່າວດີໃນພຣະ ຄຳພີຄືການທີ່ພຣະເຢຊູຄຣິດໄດ້ຕາຍແທນຄວາມຜິດບາບຂອງພວກເຮົາ. ພຣະອົງໄດ້ໄຖ່ແທນບາບກຳຂອງຂ້ອຍ ແລະຂອງເຈົ້າ. ຫຼາຍຄົນຄິດວ່າ ພຣະຄຣິດ ໄດ້ສະເດັດມາໃນໂລກສ່ວນໃຫຍ່ແມ່ນເພື່ອເປັນຕົວຢ່າງຫລືສອນພວກເຮົາໃຫ້ຮູ້ໃນການດຳລົງຊີວິດ. ເຖິງຢ່າງໃດກໍຕາມ, ສາເຫດຕົ້ນຕໍຂອງການກຳເນີດຂອງພຣະເຢຊູຄຣິດແມ່ນເພື່ອພຣະອົງຈະຕາຍເທິງໄມ້ກາງແຂນເພື່ອຄວາມຜິດບາບຂອງພວກເຮົາ. ມີຫລາຍສາດສະໜາທີ່ອ້າງວ່າ ມີການສອນສິ່ງມະຫັດ ສະຈັນປະທານໂດຍຜູ້ສັກສິດ. ເຖິງຢ່າງໃດກໍຕາມ, ມີພຽງພຣະຄຳພີທີ່ບອກພວກເຮົາວ່າ ພຣະບຸດຂອງພຣະເຈົ້າໄດ້ສະເດັດມາໃນໂລກ ແລະຕາຍເພື່ອຄວາມຜິດບາບຂອງພວກເຮົາ. ພຣະເຢຊູຄຣິດ “ພຣະອົງຜູ້ຊົງຖືກມອບໄວ້ໃຫ້ເຖິງແກ່ຄວາມຕາຍແລ້ວ ເພາະບາບກຳຂອງພວກເຮົາ ແລະພຣະເຈົ້າໄດ້ຊົງບັນດານໃຫ້ພຣະອົງເປັນຄືນຂຶ້ນມາຈາກຄວາມຕາຍ ເພື່ອໃຫ້ພວກເຮົາໄດ້ຊົງຖືວ່າ ເປັນຄົນຊອບທຳຕໍ່ໜ້າພຣະອົງ”. (ໂຣມ 4:25).

### ຄວາມຈຳເປັນຂອງໄມ້ກາງແຂນ

ຈາກທັດສະນະຂອງມະນຸດ ເລື່ອງການຄຶງຂອງພຣະຄຣິດອາດຈະເບິ່ງຄືວ່າ ເປັນຄວາມໂສກເສົ້າທີ່ບໍ່ດີ. ເຖິງຢ່າງໃດກໍຕາມ,ຈາກທັດສະນະຂອງພຣະເຈົ້າ ມັນຈຳເປັນສຳລັບຄວາມລອດຂອງມະນຸດ. ຜູ້ທີ່ເຊື່ອວ່າ ພຣະເຈົ້າຈະຮັບຮູ້ຄວາມສຳຄັນທີ່ສຸດຂອງຄວາມຕາຍຂອງພຣະຄຣິດ. “ເລື່ອງຄວາມຕາຍຂອງພຣະຄຣິດທີ່ໄມ້ກາງແຂນນັ້ນ ເປັນເລື່ອງໂງ່ສຳລັບພວກທີ່ກຳລັງຈິບຫາຍໄປ, ແຕ່ສຳລັບພວກເຮົາທີ່ກຳລັງຮັບຄວາມພົ້ນນັ້ນ ຖືວ່າ ເປັນຣິດອຳນາດຂອງພຣະເຈົ້າ” (1 ໂກຣິນໂທ 1:18)

ມັນບໍ່ພຽງພໍທີ່ຈະສອນກ່ຽວກັບຄວາມເປັນພຣະເຈົ້າຂອງພຣະເຢຊູຄຣິດ, ເຊັ່ນ ການກຳເນີດ, ຄຳສອນ, ຕົວຢ່າງທີ່ດີ.

ພວກເຮົາຕ້ອງເນັ້ນໜັກເຖິງເຫດການທີ່ສຳຄັນທີ່ສຸດໃນປະຫວັດສາດຂອງມະນຸດ - ຄືການຖືກຄຶງຂອງພຣະຄຣິດ. “ແຕ່ສຳລັບພວກເຮົາແລ້ວ ພວກເຮົາປະກາດເລື່ອງພຣະຄຣິດ ຜູ້ຖືກຄຶງໄວ້ທີ່ໄມ້ກາງແຂນນັ້ນ ອັນເປັນເລື່ອງທີ່ພວກຢິວຊຸນສະດຸດ ແລະເປັນເລື່ອງທີ່ພວກຕ່າງຊາດຖືວ່າໂງ່,” (1 ໂກຣິນໂທ 1:23).

ພຣະເຢຊູຄຣິດຮູ້ວ່າ ພຣະອົງຈະຕ້ອງຕາຍເທິງໄມ້ກາງແຂນ ແລະພຣະອົງໄດ້ຊົງກະທຳດ້ວຍຄວາມເຕັມໃຈຍ້ອນຄວາມຮັກຂອງພຣະອົງ ສຳລັບມະນຸດ. “ຕັ້ງແຕ່ນັ້ນມາ ພຣະເຢຊູເຈົ້າກໍເລີ່ມອະທິບາຍໃຫ້ພວກສາວົກຟັງ ໂດຍກ່າວວ່າ, “ເຮົາຈຳເປັນຕ້ອງໄປນະຄອນເຢຣູຊາເລັມ ແລະຕ້ອງຮັບຄວາມທົນທຸກທໍລະມານຢ່າງໜັກຈາກພວກເຖົ້າແກ່ ພວກຫົວໜ້າປະໂຣຫິດ ແລະພວກທຳມະຈານ, ເຮົາຈະຖືກຂ້າ ແຕ່ໃນວັນຖ້ວນສາມເຮົາຈະເປັນຄືນມາຈາກຕາຍສູ່ຊີວິດ”. (ມັດທາຍ 16:21)

ການຕາຍຂອງພຣະຄຣິດບໍ່ແມ່ນຄວາມຜິດພາດ, ແຕ່ແມ່ນຄວາມຈຳເປັນ." ‘ບຸດມະນຸດຕ້ອງຖືກມອບໄວ້ໃນມືຂອງບັນດາຄົນບາບ ແລະຖືກຄຶງໄວ້ທີ່ໄມ້ກາງແຂນ ແລ້ວໃນວັນຖ້ວນສາມກໍຈະເປັນຄືນມາສູ່ຊີວິດ.” (ລູກາ 24:7).

### ຄວາມໝາຍຂອງໄມ້ກາງແຂນ

ເປັນຫຍັງພຣະຄຣິດຈຶ່ງສິ້ນພຣະຊົນ? ພຣະຄຳພີສອນຢ້ຳເລື້ອຍໆວ່າ ພຣະອົງຊົງສິ້ນພຣະຊົນ ເພື່ອເປັນຄ່າໄຖ່ບາບຂອງພວກ ເຮົາ."ພຣະຄຣິດໄດ້ສິ້ນພຣະ ຊົນເພື່ອພວກເຮົາ". . . "ພຣະຄຣິດໄດ້ສິ້ນພຣະຊົນເພື່ອບາບຂອງພວກເຮົາ". . ."ເພາະວ່າພຣະເຈົ້າໄດ້ຊົງໃຫ້ພຣະອົງຮັບບາບເພື່ອພວກເຮົາ“ …ຜູ້ທີ່ບໍ່ ໄດ້ຫວງແມ່ນແຕ່ພຣະບຸດຂອງພຣະອົງເອງ, ແຕ່ໄດ້ຊົງປະທານພຣະອົງໃຫ້ພວກເຮົາໝົດທຸກຄົນ”.. . "ພຣະຄຣິດຍັງໄດ້ຊົງຮັກພວກເຮົາ, ແລະໄດ້ຊົງປະ ທານພຣະອົງເອງເພື່ອພວກເຮົາ") ພຣະເຢຊູຄຣິດບໍ່ໄດ້ເປັນຄົນບາບ ແລະບໍ່ສົມຄວນທີ່ຈະໄດ້ຮັບຄວາມຕາຍ. ພຣະອົງໄດ້ສິ້ນພຣະຊົນເພື່ອການບາບ ຂອງຂ້າພຣະເຈົ້າ, ຂອງທ່ານ ແລະຄົນອື່ນໆ.

ພຣະເຈົ້າຊົງທ່ຽງທຳ ແລະ ບໍລິສຸດ. ສະນັ້ນ, ພຣະອົງບໍ່ພຽງແຕ່ຈະເບິ່ງຂ້າມ ຫລືປະຕິເສດຄວາມບາບ. ເມື່ອມີການກະທຳຜິດທາງອາຊະຍາກຳ, ກົດໝາຍຮຽກຮ້ອງໃຫ້ຜູ້ກະທຳຜິດຕ້ອງຖືກລົງໂທດ. ການຕາຍຂອງພຣະຄຣິດທີ່ໄມ້ກາງແຂນ ໄດ້ຈ່າຍຄ່າໄຖ່ທັງໝົດທີ່ຄວາມບໍລິສຸດແລະຄວາມຍຸດຕິທຳຂອງພຣະເຈົ້າຮຽກຮ້ອງ. ຜູ້ພິພາກສາຈະບໍ່ພໍໃຈຈົນກວ່າການລົງໂທດທີ່ຍຸດຕິທຳຂອງການກະທຳຜິດຈະເກີດຂຶ້ນ. ພຣະເຈົ້າ, ເປັນຜູ້ພິພາກສາ, ຊົງພໍໃຈຢ່າງຍິ່ງ (ປະນີປະນອມ) ໂດຍການສິ້ນພຣະຊົນຂອງພຣະຄຣິດເທິງໄມ້ກາງແຂນ. ( "ທີ່ພຣະເຈົ້າໄດ້ຊົງໃຫ້ປາກົດນັ້ນ ເພື່ອໃຫ້ເປັນຜູ້ໄຖ່ໂທດແທນບາບກຳ ໂດຍຄວາມເຊື່ອໃນພຣະໂລຫິດຂອງພຣະອົງ” - ໂຣມ 3:25).

ບາງຄັ້ງ ພຣະເຢຊູຄຣິດຖືກກ່າວເຖິງໃນຖານະເປັນພຣະຜູ້ໄຖ່ຂອງເຮົາ. ການສິ້ນພຣະຊົນຂອງພຣະອົງເທິງໄມ້ກາງແຂນໄດ້ນຳເອົາການໄຖ່. ນີ້ໝາຍຄວາມວ່າ ພຣະຄຣິດໄດ້ຮັບການຊົງພໍພຣະໄທຂອງພຣະເຈົ້າໃຫ້ກັບພວກເຮົາໂດຍຄວາມຕາຍຂອງພຣະອົງ. ພຣະອົງໄດ້ໄຖ່ຫລືປົດປ່ອຍພວກເຮົາ:
ປົດປ່ອຍພວກເຮົາ:

1) ຈາກການລົງໂທດຂອງກົດບັນຍັດ “ພຣະຄຣິດໄດ້ຊົງໄຖ່ພວກເຮົາໃຫ້ພົ້ນຈາກການສາບແຊ່ງຂອງກົດບັນຍັດ ໂດຍການທີ່ພຣະອົງຊົງຍອມຖືກສາບແຊ່ງແທນພວກເຮົາ: ເພາະມີຄໍາຂຽນໄວ້ວ່າ, “ທຸກຄົນທີ່ຖືກແຂວນໄວ້ທີ່ຕົ້ນໄມ້ ກໍຖືກສາບແຊ່ງແລ້ວ.” (ຄາລາເຕຍ 3:13).

2) ຈາກກົດໝາຍຂອງມັນເອງ "ດັ່ງນັ້ນ ພີ່ນ້ອງທັງຫລາຍຂອງເຮົາເອີຍ ພວກເຈົ້າໄດ້ຕາຍຈາກກົດບັນຍັດ ໂດຍພຣະກາຍຂອງພຣະຄຣິດ. . .” (ໂຣມ 7: 4).

3) ຈາກອໍານາດຂອງຄວາມບາບ "ພວກເຮົາຮູ້ສິ່ງນີ້ແລ້ວວ່າ ຊີວິດເກົ່າຂອງພວກເຮົານັ້ນ ໄດ້ຖືກຄຶງໄວ້ກັບພຣະອົງແລ້ວ ແລະຊີວິດເກົ່າຊຶ່ງເປັນທີ່ຢູ່ຂອງບາບກໍານັ້ນ ຈະຖືກທໍາລາຍເສຍ. . .” (ໂຣມ 6: 6).

<u>ພຣະຄຣິດໄດ້ສິ້ນພຣະຊົນເພື່ອທຸກຄົນ</u>

ການຕາຍຂອງພຣະຄຣິດແມ່ນຂ່າວດີສໍາລັບມະນຸດ ແລະມັນເປັນສິ່ງທີ່ປະເສີດແທ້ໆ. ໂດຍສະເພາະ ການຕາຍຂອງພຣະອົງແມ່ນສໍາລັບມະນຸດທຸກຄົນ. ຜູ້ທີ່ໄດ້ສະຫລະພຣະອົງເອງ ເພື່ອເປັນຄ່າໄຖ່ມະນຸດທຸກຄົນ ຊຶ່ງການນີ້ໄດ້ກ່າວເປັນຄໍາພະຍານໃນເວລາອັນເໝາະສົມ. "(1 ຕີໂມທຽວ 2:6). "ເພາະວ່າພຣະຄຸນຂອງພຣະເຈົ້າໄດ້ຊົງເປີດເຜີຍແລ້ວ ເພື່ອນໍາຄວາມລອດພົ້ນມາໃຫ້ຄົນທັງປວງ.” (ຕີໂຕ 2:11). ມັນເປັນໄປໄດ້ບໍສໍາລັບມະນຸດບາງຄົນທີ່ຈະຈ່າຍຄ່າໂທດຂອງຕົນເອງ? ແມ່ນແລ້ວ, ມັນເປັນໄປໄດ້.
ຢ່າງໃດກໍຕາມ, ສິ່ງນີ້ຮຽກຮ້ອງໃຫ້ເກີດຄວາມທຸກທໍລະມານນິລັນດອນໃນນາລົກ ເນື່ອງຈາກການລົງໂທດທີ່ຍິ່ງໃຫຍ່ຈົນຜູ້ເປັນຫນີ້ບໍ່ສາມາດຈະສົດເຊີຍໄດ້ໂດຍຄົນທີ່ບໍ່ສົມບູນແບບ, ຂອງຖວາຍທີ່ເຕັມໄປດ້ວຍຄວາມບາບ. ມັນສຸດຍອດຫຼາຍແທ້ໆ ທີ່ພຣະຄຣິດໄດ້ຈ່າຍຄ່າໄຖ່ບາບສໍາລັບພວກເຮົາ! ພຣະອົງຊົງເປັນຜູ້ນັ້ນທີ່ສາມາດຈ່າຍຄ່າໄຖ່ໄດ້ຢ່າງຄົບຖ້ວນ ເພາະພຣະອົງບໍ່ມີບາບ ແລະຊົງເປັນພຣະເຈົ້າ ແລະມະນຸດຢ່າງເຕັມບໍລິບູນ.

ທີ່ມາ: https://filedn.com/lD0GfuMvTstXgqaJfpLL87S/sweet_images/jpg/40/40_Mt_27_13_RG.jpg -

ຄຳຖາມທົບທວນ ບົດຮຽນທີ 7 - ຄວາມຕາຍຂອງພຣະຄຣິດ

ຖືກ ຫຼື ຜິດ

1. ມະນຸດເກືອບທຸກຄົນໄດ້ເຮັດບາບຕໍ່ສູ້ພຣະເຈົ້າ.
2. ພຣະເຈົ້າຊົງຖືວ່າ ການຄຶງໄວ້ທີ່ໄມ້ກາງແຂນຂອງພຣະຄຣິດເປັນຄວາມໂສກເສົ້າທີ່ບໍ່ດີ.
3. ພຣະເຢຊູຄຣິດສິ້ນພຣະຊົນຢູ່ເທິງໄມ້ກາງແຂນ ເພື່ອຈ່າຍຄ່າໄຖ່ໂທດສຳລັບບາບກຳຂອງພວກເຮົາ.
4. ໂມເຊເປັນພຣະຜູ້ໄຖ່ຂອງພວກເຮົາ.

ແບບປາລະໄນ

5. ທາງເລືອກຂອງມະນຸດປະກອບມີ:
   ກ. ລະມັດລະວັງທີ່ຈະບໍ່ເຮັດບາບຈັກເທື່ອ
   ຂ. ຮັບຮູ້ວ່າ ພຣະເຈົ້າອາດຈະແກ້ບາບກຳສ່ວນໃຫຍ່
   ຄ. ຈ່າຍຄ່າໄຖ່ໂທດບາບກຳໂດຍການທຳລະມານຊື່ອນີລັນດອນໃນນາລິກ
   ງ. ເຊື່ອວ່າ ພຣະຄຣິດໄດ້ຈ່າຍຄ່າໄຖ່ສຳລັບບາບຂອງພວກເຮົາແລ້ວ
6. ຂ່າວດີໃນພຣະຄຳພີຄື:
   ກ. ພຣະຄຣິດໄດ້ສິ້ນພຣະຊົນເພື່ອບາບກຳຂອງພວກເຮົາ
   ຂ. ພຣະເຈົ້າຈະເບິ່ງຂ້າມບາບກຳຂອງພວກເຮົາ
   ຄ. ໂດຍພື້ນຖານແລ້ວ ມະນຸດເປັນຄົນດີ
   ງ. ພຣະເຈົ້າຊົງມີຄວາມກະລຸນາເກີນໄປທີ່ຈະລົງໂທດບາບກຳ
7. ພຣະເຢຊູຄຣິດ:
   ກ. ປະຫລາດໃຈຫລາຍເມື່ອມະນຸດມາຄຶງພຣະອົງ
   ຂ. ພະຍາຍາມຫລີກລ້ຽງການຕາຍເທິງໄມ້ກາງແຂນ
   ຄ. ຫວັງວ່າ ຄຳສອນຂອງພຣະອົງຈະເຮັດໃຫ້ມະນຸດກາຍເປັນຄົນດີໄດ້
   ງ. ຮູ້ວ່າ ພຣະອົງຈະຕ້ອງຕາຍເທິງໄມ້ກາງແຂນ ແລະຍອມຕາຍດ້ວຍຄວາມເຕັມໃຈເພື່ອບາບກຳຂອງພວກເຮົາ

ຕື່ມໃສ່ຊ່ອງຫວ່າງ

8. ພຣະເຈົ້າບໍ່ພຽງແຕ່ເບິ່ງຂ້າມຄວາມບາບ ເພາະວ່າ ພຣະອົງເປັນ_____________ແລະ_________________________.
9. ພຣະເຢຊູຄຣິດໄດ້ຖວາຍຕົວພຣະອົງເອງເປັນຄ່າໄຖ່ສຳລັບ____________________________.
10. ມະນຸດທຸກຄົນລ້ວນແຕ່ເປັນຄົນບາບ, ແຕ່ພຣະຄຣິດ_______________ ສຳລັບພວກເຮົາ.

ການສຶກສາຕໍ່ໄປ

ເອເຟໂຊ 1: 7, ໂກໂລຊາຍ 1:14, ເອຊາຢາ 53: 8, ດານີເອນ 9:26, ເອຊາຢາ 53: 6, ກິດຈະການ 2:23, ມັດທາຍ 27:35,
ມາລະໂກ 15:24, ໂຢຮັນ 10: 17-18, ເຮັບເຣີ 9:22, 1 ໂກຣິນໂທ 15: 3-4,
ໂຣມ 3:25, ໂຣມ 5: 6,
2 ໂກຣິນໂທ 5:14,
ເອເຟໂຊ 5:25, ເຮັບເຣີ 12:2